Mekong Migration Network (MMN)

# ບົດສະຫຼຸບຫຍໍ້

## ການຍ້າຍຖິ່ນຢູ່ພາກພື້ນແມ່ນ້ຳຂອງ

### ປຶ້ມແຫຼ່ງຂໍ້ມູນ: ການສຶກສາແບບເຈາະເລິກ: ການຈັບກຸມ, ການຄຸມຂັງ ແລະ ການເນລະເທດ

ປຶ້ມແຫຼ່ງຂໍ້ມູນເຫຼັ້ມທີສາມ ຊຶ່ງເຄືອຂ່າຍການຄົ້ນຄວ້າກ່ຽວກັບການຍ້າຍຖິ່ນຢູ່ພາກພື້ນແມ່ນ້ຳຂອງ (MMN) ໄດ້ຂຽນຂຶ້ນໂດຍການພິຈາລະນາຈາກບັນດາຄຳຖາມນັ້ນ ບໍ່ພຽງແຕ່ອີງໃສ່ຄວາມຖືກຕ້ອງທາງກົດໝາຍຂອງການດຳເນີນການທີ່ເປັນປະໂຫຍດເທົ່ານັ້ນ ມັນຍັງເປັນເຫດຜົນທີ່ພິສູດການຈັບກຸມ, ການຄຸມຂັງ ແລະ ການເນລະເທດຂອງແຮງງານຍ້າຍຖິ່ນຢູ່ໃນຂົງເຂດພາກພື້ນແມ່ນ້ຳຂອງ. ປຶ້ມແຫຼ່ງຂໍ້ມູນເຫຼັ້ມນີ້ແມ່ນໝາກຜົນຂອງການວິໄຈຂອງຫຼາຍປະເທດທີ່ຮ່ວມມືກັນໃນເລື່ອງການຍ້າຍຖິ່ນ, ອົງການທີ່ບໍ່ຂຶ້ນກັບລັດຖະບານ, ບັນດາອົງການຈັດຕັ້ງຕ່າງໆ ແລະ ບັນດາສະຖາບັນການສຶກສາທີ່ມີທີ່ຕັ້ງຢູ່ຫຼາຍປະເທດ ເຊັ່ນ ມຽນມາ, ກຳປູເຈຍ, ສປປ ລາວ, ໄທ, ຫວຽດນາມ ແລະ ຢູນານຂອງຈີນ.

ເພື່ອຕອບໂຕ້ກັບຄວາມຮຸນແຮງຕໍ່ກັບສິດທິມະນຸດ ຊຶ່ງປະສົບໂດຍຜູ້ຍ້າຍຖິ່ນໃນຂະນະທີ່ຖືກຈັບກຸມ, ຖືກກັກຂັງ ແລະ ຖືກເນລະເທດ. ບົດລາຍງານນີ້ແນະນຳໃຫ້ລັດຖະບານໃນພາກພື້ນນີ້ ເພື່ອ:

- ຢັບຢັ້ງການປຸ້ນສະດົມຜູ້ຍ້າຍຖິ່ນ;

- ກຳຈັດບັນດາຂໍ້ຈຳກັດຫຼືປະກົດການຕ່າງໆທີ່ຈະນຳໄປສູ່ເງື່ອນໄຂເຮັດວຽກທີ່ເອົາລັດເອົາປຽບ, ມີການທາລຸນ, ແລະ ເຮັດໃຫ້ຜູ້ຍ້າຍຖິ່ນມີຄວາມສ່ຽງໃນການຖືກຈັບກຸມ, ຖືກກັກຂັງ ແລະ ຖືກເນລະເທດ;

- ປະຕິຮູບຂັ້ນຕອນດຳເນີນງານໃນການຈັບກຸມ, ການຄຸມຂັງ ແລະ ການເນລະເທດຜູ້ຍ້າຍຖິ່ນ ໃນຖານະທີ່ພວກເຂົາເປັນຜູ້ໜ້າສົງສານ, ທີ່ເປີດເຜີຍ ແລະ ເປັນຜູ້ທີ່ຮູ້ເທົ່າບໍ່ເຖິງການຈຶ່ງມີຄວາມຜິດພາດທາງກົດໝາຍ.

## ການກະທຳຄວາມຜິດທາງກົດໝາຍຂອງຜູ້ຍ້າຍຖິ່ນ

ການສຶກສາວິໄຈສະແດງໃຫ້ເຫັນວ່າ ຊ່ອງວ່າງຂອງກົດໝາຍ ສຳລັບການຍ້າຍຖິ່ນຢູ່ໃນອະນຸພາກພື້ນລ້ອງແມ່ນ້ຳຂອງ ເປັນປັດໄຈໜຶ່ງທີ່ຜັກດັນໃຫ້ຜູ້ຍ້າຍຖິ່ນຂ້າມຊາຍແດນແບບຜິດກົດໝາຍ ຊຶ່ງຕາມມາດ້ວຍຄວາມສ່ຽງໄພຈົນເຖິງຂັ້ນເປັນອັນຕະລາຍຕໍ່ຊີວິດຂອງເຂົາເຈົ້າ. ຊີວິດຂອງຜູ້ຍ້າຍຖິ່ນແມ່ນມີຄວາມສ່ຽງໄພສູງ



**MMN Secretariat**
Hong Kong Office
info@mekongmigration.org
c/o Asian Migrant Centre, Flat 6, 13/F, Block A, Fuk Keung Industrial Building, 66-68 Tong Mi Road, Prince Edward, Kowloon, Hong Kong
Chiang Mai Office
advocacy@mekongmigration.org
c/o MAP Foundation, 63/31 Moo 8, U-mong, Soi 4 (P.O. Box 153 Chiang Mai University 50200) , Thailand

ເມື່ອພວກເຂົາຈຳຕ້ອງໄດ້ອາໄສສິ່ງທີ່ມີເງື່ອນງຳເຊື່ອນຊ້ອນຕົວໃນການຍ້າຍຖິ່ນ ເຊັ່ນ: ອາໄສລີ້ຢູ່ໃນພາຊະນະບັນຈຸໃດໜຶ່ງ, ລີ້ຊ່ອນຢູ່ນຳກຳປັ່ນ, ເຮືອ ຫຼືລີ້ຊ່ອນຢູ່ເຂດຊາຍແດນ. ຍິ່ງໄປກວ່ານີ້ ການກະທຳຜິດກົດໝາຍຂອງຜູ້ຍ້າຍຖິ່ນເຫຼົ່ານັ້ນ ພຽງແຕ່ເປັນການເປີດປະຕູໃຫ້ແກ່ນາຍໜ້າທຳການຫຼອກລວງ ແລະ ສວຍໃຊ້ເພື່ອສໍ້ໂກງເຈົ້າໜ້າທີ່ ພະນັກງານລັດ ເພື່ອຂູ່ເຂັນເອົາສິນບົນ.

ເຄືອຂ່າຍການຄົ້ນຄວ້າກ່ຽວກັບການຍ້າຍຖິ່ນໃນພາກພື້ນລ້ອງແມ່ນ້ຳຂອງ ໄດ້ແນະນຳວ່າ ລັດຖະບານຂອງບັນດາປະເທດໃນພາກພື້ນລ້ອງແມ່ນ້ຳຂອງ ຈະຕ້ອງໄດ້ກະກຽມຊ່ອງທາງທີ່ຖືກຕ້ອງເໝາະສົມສຳລັບທຸກຄົນ ເພື່ອໃຫ້ການຍ້າຍຖິ່ນເພື່ອຊອກວຽກເຮັດງານທຳ ຖືກຕ້ອງຕາມກົດໝາຍ. ນອກຈາກນີ້ ຖ້າຫາກລັດຖະບານມີຄວາມກັງວົນກ່ຽວກັບເລື່ອງ ການເຂົ້າມາຂອງຜູ້ຍ້າຍຖິ່ນປາສະຈາກເອກະສານທີ່ຖືກຕ້ອງ ວິທີແກ້ໄຂງ່າຍດາຍແມ່ນ ແນະນຳພວກເຂົາໄປປະກອບເອກະສານຢູ່ດ່ານຊາຍແດນໂດຍກົງ. ຖ້າພວກເຂົາເຈົ້າໄດ້ເຂົ້າເຖິງການບໍລິການຮັບສະໝັກງານທີ່ຖືກຕ້ອງຕາມກົດໝາຍທີ່ຊາຍແດນ ພວກເຂົາກໍສາມາດເດີນທາງໄປຫາບ່ອນເຮັດວຽກໄດ້ຢ່າງຖືກຕ້ອງ, ເປີດເຜີຍ ແລະ ສາມາດຫຼີກລ້ຽງຄວາມຈຳເປັນທີ່ຕ້ອງເດີນທາງດ້ວຍຄວາມສ່ຽງໄພ ໂດຍອາໄສເງື່ອນງຳຕ່າງໆ.

ບົດລາຍງານ ໄດ້ສະແດງໃຫ້ຮູ້ວ່າ ພາຍຫຼັງທີ່ມີການບັງຄັບໃຊ້ກົດໝາຍແບບບໍ່ສະໝໍ່າສະເໝີ ຄວາມບໍ່ໄວ້ວາງໃຈ ແລະ ຄວາມຂຸ່ນເຄືອງໃຈຂອງຄົນໄດ້ແຜ່ກະຈາຍໃນທົ່ວສັງຄົມ. ໃນຂະນະທີ່ຜູ້ຍ້າຍຖິ່ນ ຖືກລົງໂທດເນື່ອງຈາກບໍ່ໄດ້ລົງທະບຽນອະນຸຍາດເຮັດວຽກ ຫຼື ບໍ່ໄດ້ຖືທະບຽນອະນຸຍາດເຮັດວຽກຕິດຕົວໄປນຳນັ້ນ ນາຍຈ້າງຜູ້ທີ່ບໍ່ສາມາດອຳນວຍຄວາມສະດວກໃຫ້ແກ່ການລົງທະບຽນຂອງຜູ້ໃຊ້ແຮງງານ ເພື່ອອະນຸຍາດເຮັດວຽກ ຫຼືຜູ້ທີ່ອະນຸຍາດເຮັດວຽກໃຫ້ລູກຈ້າງທີ່ຂຶ້ນກັບນັ້ນ ພັດບໍ່ໄດ້ຮັບໂທດຕາມກົດໝາຍ. ດັ່ງນັ້ນ ໃນຂະນະທີ່ຜູ້ຍ້າຍຖິ່ນເຂົ້າໃຈວ່າ ພວກເຂົາຈຳຕ້ອງນັບຖືກົດໝາຍຂອງປະເທດນັ້ນໆ ມັນແມ່ນບັນຫາຫຍຸ້ງຍາກທີ່ເຂົາເຈົ້າ ຈະທົນຢູ່ໃນກົດໝາຍເຫຼົ່ານີ້ ໃນຂະນະທີ່ນາຍຈ້າງບໍ່ໄດ້ປະຕິບັດ.

ການກຳຈັດບັນດາຂໍ້ຈຳກັດຫຼືປະກົດການຕ່າງໆທີ່ຈະນຳໄປສູ່ການກະທຳທີ່ທາລຸນ ແລະ ເງື່ອນໄຂການເຮັດວຽກທີ່ເອົາລັດເອົາປຽບ ຊຶ່ງເຮັດໃຫ້ຜູ້ຍ້າຍຖິ່ນມີຄວາມສ່ຽງໄພຕໍ່ການກັກຕົວ ແລະ ເນລະເທດ.

ລະບົບການອະນຸຍາດເຮັດວຽກໄດ້ສ້າງ ແລະ ສົ່ງເສີມໃຫ້ເປັນໄປຕາມກົດເກນທີ່ຝືນທຳມະຊາດ ຊຶ່ງເປັນການບັງຄັບຜູ້ຍ້າຍຖິ່ນ ໃຫ້ຂຶ້ນກັບນາຍຈ້າງບໍ່ພຽງແຕ່ໃນການເຮັດວຽກ ແຕ່ຫາກຮວມໄປເຖິງການຢູ່ກິນ ພັກເຊົາ ແລະ ສະຖານະພາບຂອງການຍ້າຍຖິ່ນ ອີກດ້ວຍ. ການທີ່ເພີ່ມຄວາມເຂັ້ມງວດໃນການຈັດເກັບພາສີນຳຜູ້ຍ້າຍຖິ່ນ ແລະ ການເພີ່ມຂຶ້ນຂອງການລ່ວງລະເມີດກະທຳຜິດນັ້ນ ຜູ້ຍ້າຍຖິ່ນຖືກພິຈາລະນາວ່າເປັນຜູ້ກະທຳຜິດ ດັ່ງນັ້ນການຖືກຈັບກຸມ, ການຄຸມຂັງ ແລະ ການເນລະເທດຜູ້ຍ້າຍຖິ່ນຈຶ່ງເພີ່ມຂຶ້ນ. ການເພີ່ມຄວາມເຂັ້ມງວດນີ້



**MMN Secretariat**
Hong Kong Office
info@mekongmigration.org
c/o Asian Migrant Centre, Flat 6, 13/F, Block A, Fuk Keung Industrial Building, 66-68 Tong Mi Road, Prince Edward, Kowloon, Hong Kong
Chiang Mai Office
advocacy@mekongmigration.org
c/o MAP Foundation, 63/31 Moo 8, U-mong, Soi 4 (P.O. Box 153 Chiang Mai University 50200) , Thailand

ເປັນການເພີ່ມພະລັງອຳນາດໃຫ້ແກ່ຄວາມບໍ່ດຸ່ນດ່ຽງກັນລະຫວ່າງນາຍຈ້າງ ແລະ ລູກຈ້າງ ແລະເຮັດໃຫ້ນາຍຈ້າງໄດ້ປຽບໃນການກະທຳທາລຸນຕໍ່ແຮງງານຍ້າຍຖິ່ນ.

ເງື່ອນໄຂການເຮັດວຽກທີ່ເອົາລັດເອົາປຽບ ແລະ ມີການໃຊ້ຄວາມຮຸນແຮງນັ້ນ ປົກກະຕິແລ້ວເປັນການຜັກດັນຜູ້ຍ້າຍຖິ່ນເຂົ້າໄປສູ່ສະຖານະພາບທີ່ບໍ່ປົກກະຕິ, ເຮັດໃຫ້ພວກເຂົາມີຄວາມສ່ຽງຕໍ່ການຖືກຈັບກຸມ, ຖືກຄຸມຂັງ ແລະ ຖືກເນລະເທດ. ຕົວຢ່າງ: ຖ້າຜູ້ຍ້າຍຖິ່ນຕ້ອງການອອກຈາກບ່ອນເຮັດວຽກທີ່ມີການເອົາລັດເອົາປຽບ, ທີ່ມີການທາລຸນ ຫຼືຕ້ອງການປ່ຽນນາຍຈ້າງໃໝ່ ພວກເຂົາຈະສູນເສຍສະຖານະພາບທາງກົດໝາຍ ແລະກາຍເປັນຜູ້ທີ່ມີຄວາມສ່ຽງຕໍ່ການຖືກຈັບກຸມ. ເມື່ອຜູ້ຍ້າຍຖິ່ນພະຍາຍາມຕໍ່ລອງນາຍຈ້າງເພື່ອເງື່ອນໄຂການເປັນຢູ່ ເຮັດວຽກທີ່ເປັນທຳ ພວກເຂົາກໍຖືກນາຍຈ້າງຂອງພວກເຂົາຍຸຕິ ດ້ວຍການຖອນ ຫຼື ລຶບລ້າງໃບອະນຸຍາດເຮັດວຽກຂອງພວກເຂົາ. ໃນກໍລະນີຕົວຢ່າງອື່ນໆອີກແມ່ນ ຜູ້ຍ້າຍຖິ່ນທີ່ລົງທະບຽນໄດ້ຖືກຈັບກຸມ ທັ້ງໆທີ່ມີເອກະສານ ເພາະວ່ານາຍຈ້າງຂອງພວກເຂົາໄດ້ຍຶດເອົາໃບອະນຸຍາດເຮັດວຽກຂອງພວກເຂົາໄວ້.

ຂໍ້ຈຳກັດຫຼືປະກົດການອື່ນໆ ທີ່ບົດລາຍງານໄດ້ເນັ້ນຄວາມສຳຄັນແມ່ນ ຂໍ້ຈຳກັດໃນການເດີນທາງ, ໄລຍະລົງທະບຽນ, ຜູ້ສາມາດລົງທະບຽນ ແລະ ການຊຸມນຸມ. ໂດຍປາສະຈາກຄວາມສາມາດໃນການປະຕິບັດສິດທິພື້ນຖານ, ຜູ້ຍ້າຍຖິ່ນຈະບໍ່ສາມາດຫຼີກລ້ຽງຄວາມສ່ຽງສູງກວ່າເກົ່າ ໃນການຖືກຈັບກຸມ, ຄຸມຂັງ ແລະ ເນລະເທດ.

ບົດລາຍງານ ໄດ້ກ່າວເຖິງຄວາມເປັນໄປໄດ້ ໃນການເຮັດບໍລິການເອກະສານ ໃຫ້ແກ່ຜູ້ຍ້າຍຖິ່ນທີ່ບໍ່ມີເອກະສານ ຢູ່ບ່ອນເຮັດວຽກ ຊຶ່ງເປັນທາງເລືອກທາງໜຶ່ງໃນການວັດແທກ ການບັງຄັບ ແລະ ຄວາມຮຸນແຮງໃນການຈ້າງງານ.

ການປະຕິຮູບຂັ້ນຕອນ ຂະບວນການດຳເນີນການຈັບກຸມ, ຄຸມຂັງ ແລະ ເນລະເທດໃຫ້ມີຄວາມຄ່ອງຕົວອ່ອນໂຍນ, ເປີດເຜີຍກວ່າເກົ່າ ແລະຢູ່ໃຕ້ການຄຸ້ມຄອງຂອງກົດໝາຍ.

ຜູ້ຍ້າຍຖິ່ນລາຍງານວ່າ ພວກເຂົາອາດເປັນເປົ້າໝາຍຈັບກຸມຢູ່ທຸກແຫ່ງຫົນ, ທຸກເວລາ ແລະພວກເຂົາມີຄວາມສາມາດພຽງນ້ອຍນິດທີ່ຈະສາມາດປົກປ້ອງເຂົາເຈົ້າເອງຈາກການຖືກຈັບກຸມ. ການບໍ່ເລືອກເຟັ້ນ, ການບຸກລຸກ, ແລະ ການກະຈາຍຂອງການຈັບກຸມ ໝາຍເຖິງຊີວິດຂອງຜູ້ຍ້າຍຖິ່ນບໍ່ມີອິດສະຫຼະສົມບູນ ຈາກຄວາມໜ້າຢ້ານກົວ ແລະ ຄວາມບໍ່ໝັ້ນຄົງ. ການນຳໃຊ້ກົດໝາຍທີ່ກຳນົດເອົາເອງໄດ້ຄຸກຄາມຄວາມໄວ້ວາງໃຈ ຂອງຜູ້ຍ້າຍຖິ່ນຕໍ່ລະບົບກົດໝາຍ; ບໍ່ຄວນກ່າວຫາສິ່ງທີ່ບໍ່ພໍໃຈແບບກ້າວລ້າວ ແລະ ເຊື່ອມເສຍ. ໃນຫຼາຍໆກໍລະນີທີ່ການດຳເນີນການຈັບກຸມບໍ່ໄດ້ໃຫ້ການນັບຖືກຽດສັກສີ ແລະ ສິດທິອັນພື້ນຖານ ຫຼື ຄວາມປອດໄພຂອງຜູ້ຍ້າຍຖິ່ນ.



**MMN Secretariat**
Hong Kong Office
info@mekongmigration.org
c/o Asian Migrant Centre, Flat 6, 13/F, Block A, Fuk Keung Industrial Building, 66-68 Tong Mi Road, Prince Edward, Kowloon, Hong Kong
Chiang Mai Office
advocacy@mekongmigration.org
c/o MAP Foundation, 63/31 Moo 8, U-mong, Soi 4 (P.O. Box 153 Chiang Mai University 50200) , Thailand

“ພວກເຮົາຖືກຈັບກຸມຢູ່ທີ່ພັກຂອງຄົນງານ... ມີເຈົ້າໜ້າທີ່ຕໍາຫຼວດ 12 ຄົນ; ໃນນັ້ນ ເປັນເພດຍິງສອງຄົນ. ພວກເຂົາໄດ້ຮ້ອງຂຶ້ນວ່າ ຜູ້ໃດທີ່ຈະພະຍາຍາມແລ່ນໜີຈະຖືກຍິງຖິ້ມ. ມີຜູ້ໜຶ່ງໄດ້ກະໂດດລົງສູ່ຫ້ວຍນ້ຳແລ້ວແລ່ນໜີໄປ, ແຕ່ກໍຖືກນໍາຈັບໄດ້ທີ່ຍອດຫ້ວຍ. ຕໍາຫຼວດໄດ້ລາກຄໍຂອງລາວກັບຄືນມາ...” (ຜູ້ໃຊ້ແຮງງານຊາວມຽນມາ ຢູ່ແມ່ສອດ).

ຊາວປະມົງຍ້າຍຖິ່ນຊາວກໍາປູເຈຍຜູ້ໜຶ່ງໄດ້ໃຫ້ຄໍາສໍາພາດຢູ່ທີ່ ຣະຍອງ, ປະເທດໄທ ລາຍງານວ່າການຈັບກຸມຊາວປະມົງ ໄດ້ເລີ່ມຕອນປະມານທ່ຽງຄືນ. ຄົນຂໍທານຊາວກໍາປູເຈຍ ທີ່ນະຄອນໂຮຈິ່ມິນ, ຫວຽດນາມ ກໍໄດ້ລາຍງານຄ້າຍຄືກັນວ່າ ການຈັບກຸມສ່ວນຫຼາຍແມ່ນຕອນກາງຄືນ. ຕໍ່ກັບເຫດການສ່ຽງຕໍ່ຄວາມປອດໄພເພີ່ມຂຶ້ນນີ້ ເຄືອຂ່າຍຄົ້ນຄວ້າກ່ຽວກັບການຍ້າຍຖິ່ນຢູ່ພາກພື້ນແມ່ນ້ຳຂອງໄດ້ໃຫ້ຄໍາແນະນໍາເຈົ້າໜ້າທີ່ໆກ່ຽວຂ້ອງໃນຂົງເຂດພາກພື້ນ ໃຫ້ຍຸຕິການຈັບກຸມໃນຕອນກາງຄືນ ແລະ ຍາມເຊົ້າຕູ່.

ມີຫຼາຍກໍລະນີທີ່ໄດ້ຈັບກຸມພວກເຂົ້າເມືອງຜິດກົດໝາຍ ມີການສວຍໃຊ້ແອບອ້າງກໍລະນີປະຕິບັດການກວດຄົ້ນຮ່າງກາຍເພື່ອຄົ້ນຫາຢາເສບຕິດ. ແມ່ຍິງຊາວສານ (ມຽນມາ) ກຸ່ມໜຶ່ງ ໄດ້ຍົກກໍລະນີຕົວຢ່າງເມື່ອເວລາພວກເຂົາຖືກຈັບກຸມໂດຍທະຫານໄທ ຕາມເສັ້ນທາງທີ່ພວກເຂົາຈະເຂົ້າໄປປະເທດໄທ ໃກ້ໆບໍລິເວນຂ້າມແດນລະຫວ່າງລັດສານ (ມຽນມາ) ກັບ ໜອງໂອກ (ປະເທດໄທ). “ມີຕູບນ້ອຍແຫ່ງໜຶ່ງ ພວກເຮົາຈໍາເປັນຕ້ອງເຂົ້າໄປໃນຫ້ອງເທື່ອລະຄົນ. ຜູ້ຍິງບາງຄົນ... ບໍ່ຢາກແກ້ເຄື່ອງຂອງພວກເຂົາອອກ ໂດຍສະເພາະແມ່ນຊຸດຊັ້ນໃນແຕ່ພວກເຂົາໄດ້ຖືກບັງຄັບໃຫ້ເຮັດຕາມຄໍາສັ່ງ”. ການຄົ້ນຕົວພວກຜູ້ຍິງຍ້າຍຖິ່ນຢູ່ເຂດປ່ຽວ ດ້ວຍເຈົ້າໜ້າທີ່ພະນັກງານທີ່ເປັນຜູ້ຊາຍ ແມ່ນການຝ່າຝືນສິດທິທາງຮ່າງກາຍຂອງແມ່ຍິງ ແລະເປັນການສ້າງໂອກາດສໍາລັບການກະທໍາສໍາເລົາໃນຂັ້ນຕໍ່ໄປ.

ເງື່ອນໄຂ ແລະ ຊ່ວງໄລຍະຂອງການກັກຂັງຜູ້ຕ້ອງຫາແມ່ນຜັນແປໄປ ຈາກສະຖານທີ່ນີ້ສູ່ສະຖານທີ່ອື່ນໂດຍປາສະຈາກການອະທິບາຍທີ່ມີເຫດມີຜົນ. ເຖິງຢ່າງໃດກໍຕາມ ພວກຍ້າຍຖິ່ນທັງຫຼາຍຢູ່ປະເທດຕ່າງໆ ໄດ້ຈົ່ມວ່າກ່ຽວກັບ ການທີ່ພວກເຂົາບໍ່ໄດ້ຮັບແຈ້ງຂະບວນການທາງກົດໝາຍ, ການຄຸ້ມຄອງການກັກຂັງ ຮວມທັງໄລຍະເວລາທີ່ເຂົາເຈົ້າຈະຖືກຄວບຄຸມຕົວ. ຜູ້ຍ້າຍຖິ່ນຈໍານວນໜຶ່ງ ໄດ້ອະທິບາຍການປະສົບການ ທີ່ເຈັບປວດໃນຂະນະທີ່ຖືກກັກຂັງວ່າ “ຕອນທີ່ຂ້ອຍຢູ່ໃນຫ້ອງຂັງນ້ອຍໆຂອງຕໍາຫຼວດ ທີ່ແມ່ສອດ, ຂ້ອຍໄດ້ເຫັນຕໍາຫຼວດ ແລະ ໝາຂອງພວກເຂົາ (ພາສາລະແລັງຂອງມຽນມາ) ຊື້ເຫຼົ້າວິດສະກີດ້ວຍເງິນທີ່ໄດ້ຮັບຈາກກຸ່ມຄົນທີ່ຖືກຄຸມຕົວໄວ້. ເມື່ອພວກເຂົາເມົາແລ້ວ ພວກເຂົາກໍໃຊ້ຄໍາເວົ້າທີ່ຫຍາບຄາຍຕໍ່ແມ່ຍິງທີ່ຢູ່ໃນຫ້ອງຂັງ. ບາງຄັ້ງພວກເຂົາໄດ້ເອົາພວກຜູ້ຍິງອອກໄປຄົ້ນຕົວເພື່ອຊອກຫາຢາເສບຕິດ. ຖ້າຫາກພວກຜູ້ຊາຍຈົ່ມບໍ່ພໍໃຈ, ພວກເຂົາໄດ້ຖືກເຕະຕີ ແລະ ຖືກຍ້າຍໄປຫ້ອງຂັງອື່ນ ເປັນເວລາສອງຫາສາມເດືອນ ໂດຍບໍ່ມີການບັນທຶກ”.


**MMN Secretariat**
Hong Kong Office
info@mekongmigration.org
c/o Asian Migrant Centre, Flat 6, 13/F, Block A, Fuk Keung Industrial Building, 66-68 Tong Mi Road, Prince Edward, Kowloon, Hong Kong
Chiang Mai Office
advocacy@mekongmigration.org
c/o MAP Foundation, 63/31 Moo 8, U-mong, Soi 4 (P.O. Box 153 Chiang Mai University 50200) , Thailand

ໃນຊ່ວງໄລຍະທີ່ທຳການເນລະເທດ ຜູ້ຍ້າຍຖິ່ນໄດ້ລາຍງານວ່າ ພວກເຂົາໄດ້ຖືກເຄື່ອນຍ້າຍເປັນກຸ່ມດ້ວຍພາຫະນະເກົ່າແກ່ຊຸດໂຊມ, ພວກເຂົາຕ້ອງໄດ້ງົດອາຫານທີ່ພຽງພໍ, ນໍ້າ ແລະ ການໃຊ້ຫ້ອງນໍ້າໃນເວລາເດີນທາງ ຊຶ່ງໂດຍທົ່ວໄປ ກໍແມ່ນໃຫ້ການດູແລແບບບໍ່ໄດ້ໃຫ້ກຽດແຕ່ຢ່າງໃດ. ຢູ່ກຳປູເຈຍ ແລະ ລາວ ພວກຍ້າຍຖິ່ນຈະຕ້ອງໄດ້ຈ່າຍຄ່າປັບໄໝ ຫຼື ຄ່າທຳນຽມໃຫ້ແກ່ເຈົ້າໜ້າທີ່ພະນັກງານທ້ອງຖິ່ນ ເຊັ່ນ: ການໃສ່ໂທດຕໍ່ຜູ້ທີ່ກະທຳຜິດກົດໝາຍ, ໂດຍສະເພາະແມ່ນການກັບບ້ານກ່ອນກຳນົດ. ຜູ້ຍ້າຍຖິ່ນທີ່ມາຈາກມຽນມ້າ ໄດ້ອະທິບາຍວ່າ ທັນທີທັນໃດ ຫຼັງຈາກຖືກເນລະເທດ ພວກເຂົາສາມາດກັບຄືນແບບງ່າຍດາຍ ແລ້ວກັບຄືນໄປປະເທດໄທ.

ບົດລາຍງານພົບວ່າ ການຂາດແຄນການດຳເນີນງານທີ່ເປັນມາດຕະຖານ ໄດ້ກໍໃຫ້ເກີດຜົນທີ່ວ່າ ກຸ່ມຜູ້ຍ້າຍຖິ່ນຮູ້ສຶກຂາດອຳນາດໃນການຕໍ່ລອງໃນເລື່ອງການເບິ່ງແຍງດູແລພວກເຂົາ. ກຸ່ມຜູ້ຍ້າຍຖິ່ນພົບບັນຫາຫຍຸ້ງຍາກທີ່ຈະຮູ້ວ່າສິດທິຂອງເຂົາເຈົ້າຖືກລ່ວງລະເມີດ ອັນເນື່ອງມາຈາກເຂົາເຈົ້າບໍ່ຮູ້ ລະບຽບກົດເກນກ່ຽວກັບສິດທິຂອງເຂົາເຈົ້າເອງ. ສິດທິຂອງຜູ້ຍ້າຍຖິ່ນບໍ່ໄດ້ປາກົດຂຶ້ນເພື່ອປະຕິບັດ ຄືກັນກັບລະບົບສິດທິທີ່ບໍ່ສາມາດໂອນໃຫ້ຜູ້ອື່ນໄດ້. ແຕ່ເຖິງຢ່າງໃດກໍຕາມ ນະໂຍບາຍຕ່າງໆ ແລະ ຄຸນສົມບັດຂອງເຈົ້າໜ້າທີ່ ກໍຂ້ອນຂ້າງມີການປ່ຽນແປງຢ່າງສະໝໍ່າສະເໝີ. ຜົນທີ່ຕາມມາກໍຄື ນາຍຈ້າງ ແລະ ບຸກຄົນຕ່າງໆລ້ວນແຕ່ຍອມຮັບຢ່າງໄວ້ວາງໃຈຕໍ່ການສະໜັບສະໜູນກົດໝາຍ ເພື່ອສືບຕໍ່ໃຊ້ການຫຼົບໜີຂອງຜູ້ຍ້າຍຖິ່ນເປັນຊ່ອງທາງຫາຜົນປະໂຫຍດທາງການເງິນຈາກຄວາມເປັນມະນຸດ ແລະ ສັກສີຂອງຜູ້ຍ້າຍຖິ່ນ.

*This executive summary is available in the following languages:*

*Burmese;*
*Cambodian (Khmer);*
*Chinese;*
*Laotian;*
*Thai; and*
*Vietnamese.*

*In case of any inconsistencies, please refer to the English text.*



**MMN Secretariat**
Hong Kong Office
info@mekongmigration.org
c/o Asian Migrant Centre, Flat 6, 13/F, Block A, Fuk Keung Industrial Building, 66-68 Tong Mi Road, Prince Edward, Kowloon, Hong Kong
Chiang Mai Office
advocacy@mekongmigration.org
c/o MAP Foundation, 63/31 Moo 8, U-mong, Soi 4 (P.O. Box 153 Chiang Mai University 50200) , Thailand